# ບົດລາຍງານ

# ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ
# ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
# ປະຈຳປີ 2023

ໂດຍ: ຕະຫຼາດຫຼັກຊັບລາວ

## ສາລະບານ


1. ຂໍ້ມູນກ່ຽວກັບບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ 1

1.1. ຂໍ້ມູນທົ່ວໄປ 1

1.2. ຂໍ້ມູນທາງການເງິນ 1

1.3. ຂໍ້ມູນສະພາບໍລິຫານ 1

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ 1

1.5. ຂໍ້ມູນຄະນະອຳນວຍການ 2

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG 2

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ 2

2.1. ຜົນການປະເມີນຄະແນນຕົວຈິງ 2

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ 3

3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ 4

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 4

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ 4

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 5

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 7

4. ສິ່ງທີ່ຕ້ອງໄດ້ປັບປຸງ 8

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ 8

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ 9

# 1. ຂໍ້ມູນກ່ຽວກັບບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

## 1.1. ຂໍ້ມູນທົ່ວໄປ

| ຫົວຂໍ້ | ລາຍລະອຽດ |
|---|---|
| ຊື່ບໍລິສັດ: | ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) |
| ທີ່ຕັ້ງສຳນັກງານ: | ສຳນັກງານໃຫຍ່, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ແຂວງ ນະຄອນຫຼວງວຽງຈັນ. |
| ເບີໂທລະສັບ: | 021 415645 |
| ປະເພດທຸລະກິດ: | ຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ |
| ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ: | 11 ທັນວາ 2015 |
| ເວັບໄຊ: | www.souvanny.la |
| ຈຳນວນພະນັກງານ: | 803 ຄົນ |
| ຈຳນວນຮຸ້ນຈົດທະບຽນ: | 165.000.000 ຮຸ້ນ |
| ລາຄາຕະຫຼາດ (30/12/2022): | 2.800 ກີບ/ຮຸ້ນ |
| ມູນຄ່າຕະຫຼາດ (30/12/2022): | 462.000 ລ້ານກີບ |

## 1.2. ຂໍ້ມູນທາງການເງິນ

| ຕົວເລກຂໍ້ມູນການເງິນ (31 ທັນວາ 2022) | |
|---|---|
| ຊັບສິນ: 1.392.681 ລ້ານກີບ | ລາຍຮັບ: 656.386 ລ້ານກີບ |
| ໜີ້ສິນ: 243.592 ລ້ານກີບ | ລາຍຈ່າຍ: 599.774 ລ້ານກີບ |
| ທຶນ: 1.149.089 ລ້ານກີບ | ກຳໄລສຸດທິ: 56.611 ລ້ານກີບ |

## 1.3. ຂໍ້ມູນສະພາບໍລິຫານ

ສະພາບໍລິຫານ ຂອງ ບໍລິສັດ ສ.ວ.ນ ປະກອບມີສະມາຊິກສະພາບໍລິຫານທັງໝົດ 9 ທ່ານ ຊຶ່ງມີລາຍຊື່ ດັ່ງນີ້:

1) ທ່ານ ສົມຈິດ ອິນທະມິດ — ປະທານ/ສະມາຊິກອິດສະຫຼະ
2) ທ່ານ ຣສ. ປອ ໄຊພອນ ກອງມະນີລາ — ຮອງປະທານ/ສະມາຊິກອິດສະຫຼະ
3) ທ່ານ ວັດດານາ ສຸຄະບັນດິດ — ສະມາຊິກ
4) ທ່ານ ບຸນເຕີມ ກົມມິດຕະພາບ — ສະມາຊິກອິດສະຫຼະ
5) ທ່ານ ພັນໂນລາ ສຸຄະບັນດິດ — ສະມາຊິກ
6) ທ່ານ ນາງ ຄຳໄຂ ລໍວັນໄຊ — ສະມາຊິກ
7) ທ່ານ ກິດສະດາ ສຸຄະບັນດິດ — ສະມາຊິກ
8) ທ່ານ ນາງ ຊຸຕິການ ສີແສງຈັນ — ສະມາຊິກ
9) ທ່ານ ພິພົບ ວາດສະໜາອາຊາສະກຸນ — ສະມາຊິກ

## 1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ບໍລິສັດ ສ.ວ.ນ ປະກອບດ້ວຍ 5 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການປະກອບດ້ວຍສະມາຊິກ ດັ່ງນີ້:

**1) ຄະນະກຳມະການກວດສອບ**

1. ທ່ານ ຣສ. ປອ ໄຊພອນ ກອງມະນີລາ — ປະທານ
2. ທ່ານ ວັດດານາ ສຸຄະບັນດິດ — ສະມາຊິກ
3. ທ່ານ ພັນໂນລາ ສຸຄະບັນດິດ — ສະມາຊິກ

**2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ**

1. ທ່ານ ສົມຈິດ ອິນທະມິດ — ປະທານ
2. ທ່ານ ວັດດານາ ສຸຄະບັນດິດ — ສະມາຊິກ
3. ທ່ານ ພັນໂນລາ ສຸຄະບັນດິດ — ສະມາຊິກ

**3) ຄະນະກຳມະການຄັດເລືອກ**

1. ທ່ານ ສົມຈິດ ອິນທະມິດ — ປະທານ
2. ທ່ານ ວັດດານາ ສຸຄະບັນດິດ — ສະມາຊິກ
3. ທ່ານ ພັນໂນລາ ສຸຄະບັນດິດ — ສະມາຊິກ

**4) ຄະນະກຳມະການກຳນົດຄ່າຕອບແທນ**

1. ທ່ານ ບຸນເຕີມ ກົມມິດຕະພາບ — ປະທານ
2. ທ່ານ ວັດດານາ ສຸຄະບັນດິດ — ສະມາຊິກ
3. ທ່ານ ພັນໂນລາ ສຸຄະບັນດິດ — ສະມາຊິກ

### 1.5. ຂໍ້ມູນຄະນະອຳນວຍການ

1. ທ່ານ ວັດດານາ ສຸຄະບັນດິດ — ຜູ້ອຳນວຍການໃຫຍ່
2. ທ່ານ ພັນໂນລາ ສຸຄະບັນດິດ — ຮອງຜູ້ອຳນວຍການໃຫຍ່ຝ່າຍການເງິນ
3. ທ່ານ ກິດສະດາ ສຸຄະບັນດິດ — ຮອງຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ

### 1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

| ຊື່ ແລະ ນາມສະກຸນ | ເບີໂທ | ອີເມລ |
|---|---|---|
| ທ່ານ ວິຈິດ ວຽງໄຊ | 020 7688 7979 | vichith.vx@gmail.com |
| ທ່ານ ນ. ພັນນຸດາ ພົມມະວົງ | 020 5988 8860 | phannudapmv16@gmail.com |

## 2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

### 2.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ ບໍລິສັດ ສ.ວ.ນ ປະຈຳປີ 2023 ແມ່ນເຫັນວ່າ: ບໍລິສັດ ສ.ວ.ນ ໄດ້ຄະແນນທັງໝົດ 71.71 ຄະແນນ ຈັດເປັນ ປະເພດ ດີ ມີລາຍລະອຽດເພີ່ມເຕີມດັ່ງນີ້:

| ພາກ | ຄະແນນທັງໝົດ | ຄະແນນຕົວຈິງ |
|---|---:|---:|
| ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ | 10 | 7.33 |
| ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ | 10 | 5.45 |
| ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ | 40 | 28.65 |
| ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ | 40 | 30.27 |
| ລວມ | **100** | **71.71** |

## 3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ

### 3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ບໍລິສັດ ສ.ວ.ນ ສາມາດປະຕິບັດໄດ້ທັງໝົດ (FA) 53%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 40% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 7% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ້າງ |
|---|---|
| - ການຈັດກອງປະຊຸມຜູ້ຖືຮຸ້ນ: ສ.ວ.ນ ໄດ້ສົ່ງໜັງສືແຈ້ງເຊີນໃຫ້ແກ່ຜູ້ຖືຮຸ້ນ ພ້ອມທັງຄັດຕິດເອກະສານສຳຄັນກ່ອນກອງປະຊຸມຜູ້ຖືຮຸ້ນ ພ້ອມນັ້ນ, ກໍໄດ້ແຈ້ງຂັ້ນຕອນ ວິທີການລົງຄະແນນສຽງ ແລະ ຜົນຂອງການລົງຄະແນນໃນແຕ່ລະວາລະ ລວມເຖິງການໃຫ້ສິດແກ່ຜູ້ຖືຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງປະຊຸມຜູ້ຖືຮຸ້ນ.<br>- ບໍລິສັດ ສ.ວ.ນ ໄດ້ກຳນົດນະໂຍບາຍເງິນປັນຜົນ ແລະ ໄດ້ຈ່າຍເງິນປັນຜົນ ໃຫ້ແກ່ຜູ້ຖືຮຸ້ນຕາມລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ພາຍໃນ 30 ວັນ ນັບແຕ່ມື້ມີມະຕິຈ່າຍເງິນປັນຜົນ.<br>- ການແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບ ໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ.<br>- ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນກ່ຽວກັບອາຍຸ, ວຸດທິການສຶກສາ, ປະສົບການ ແລະ ການດຳລົງຕຳແໜ່ງຂອງພວກເຂົາໃນບໍລິສັດຈົດທະບຽນ ກ່ອນກອງປະຊຸມຜູ້ຖືຮຸ້ນ.<br>- ຜູ້ອຳນວຍການໃຫຍ່ ແລະ ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ. | - ບໍລິສັດ ສ.ວ.ນ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.<br>- ບໍລິສັດ ສ.ວ.ນ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.<br>- ບໍລິສັດ ສ.ວ.ນ ຍັງບໍ່ໄດ້ກຳນົດເຫດການກ່ຽວກັບການລົງທຶນ, ການຊື້-ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ ແລະ ການອອກຈຳໜ່າຍຮຸ້ນໃໝ່ ແລະ ເຫດການອື່ນໆທີ່ສຳຄັນ ຊຶ່ງຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. |

### 3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ

ບໍລິສັດ ສ.ວ.ນ ສາມາດປະຕິບັດໄດ້ທັງໝົດ (FA) 45%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 18% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 36% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ້າງ |
|---|---|
| - ສະພາບໍລິຫານ ໄດ້ກຳນົດນະໂຍບາຍກ່ຽວກັບຄວາມປອດໄພ ແລະ ສະຫວັດດີການສັງຄົມ, ການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ ເພື່ອໃຫ້ພະນັກງານຂອງບໍລິສັດປະກອບສ່ວນຢ່າງຕັ້ງໜ້າເຂົ້າ ໃນການຈັດຕັ້ງປະຕິບັດວຽກ | - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ. |

| | |
|---|---|
| ງານໃຫ້ບັນລຸຜົນສຳເລັດຕາມເປົ້າໝາຍຂອງບໍລິສັດ ແລະ ມີສ່ວນຮ່ວມໃນວຽກງານຄຸ້ມຄອງບໍລິຫານບໍລິສັດ.<br>- ບໍລິສັດ ສ.ວ.ນ ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນ ເພື່ອຮັບຄຳເຫັນ ຫຼື ຮ້ອງຮຽນ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງທຶນ ກ່ຽວກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກເຂົາ ໄວ້ໃນເວັບໄຊ ຫຼື ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ.<br>- ບໍລິສັດ ສ.ວ.ນ ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຟ້ອງ ຂອງພະນັກງານ ຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງບໍລິສັດ.<br>- ສະພາບໍລິຫານ ໄດ້ກຳນົດນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງບໍລິສັດ. | - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງທຶນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຮ້ອງຮຽນ ກ່ຽວກັບພຶດຕິກຳ ທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.<br>- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ກ່ຽວກັບ ການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ.<br>- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ກ່ຽວກັບການພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່.<br>- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້.<br>- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ ຂອງບໍລິສັດ. |

### 3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ບໍລິສັດ ສ.ວ.ນ ສາມາດປະຕິບັດໄດ້ທັງໝົດ (FA) ຄະແນນ, ຄິດເປັນ 70% ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 3% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 27% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ້າງ |
|---|---|
| - ບໍລິສັດ ສ.ວ.ນ ໄດ້ເປີດເຜີຍຂໍ້ມູນກ່ຽວກັບລາຍການທີ່ກ່ຽວພັນ, ລັກສະນະ, ມູນຄ່າ ແລະ ລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ພ້ອມທັງສາຍພົວພັນຂອງຜູ້ກ່ຽວຕໍ່ລາຍການທີ່ກ່ຽວພັນໃນເອກະສານລາຍງານການເງິນ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍກ່ຽວກັບ ວິໄສທັດ, ຈຸດປະສົງເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານຂອງບໍລິສັດ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍຂໍ້ມູນລະອຽດກ່ຽວກັບ, ປັດໄຈຄວາມສ່ຽງຂອງບໍລິສັດຂໍ້ມູນທາງການເງິນ, ຂໍ້ມູນທີ່ບໍ່ແມ່ນການເງິນ, ປະຫວັດການສຶກສາ ແລະ ການຝຶກອົບຮົມຂອງສະພາບໍລິຫານ, ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິ | - ບໍລິສັດ ສ.ວ.ນ ບໍ່ໄດ້ເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນ ຂັ້ນຕອນການພິຈາລະນາ ແລະ ການອະນຸມັດ ລາຍການທີ່ກ່ຽວພັນ (RPTs) ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.<br>- ບໍລິສັດ ສ.ວ.ນ ບໍ່ໄດ້ມີການເປີດເຜີຍຂໍ້ມູນລະອຽດກ່ຽວກັບລາຍການທີ່ກ່ຽວພັນ, ນະໂຍບາຍຈ່າຍເງິນປັນຜົນ ແລະ ການປ່ຽນແປງ ຫຼື ເຫດການທີ່ສຳຄັນ ທີ່ເກີດຂຶ້ນພາຍໃນປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.<br>- ບໍລິສັດ ສ.ວ.ນ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. |

| | |
|---|---|
| ຫາໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ບົດລາຍງານການເຄື່ອນໄຫວທຸລະກິດສຳລັບ 6 ເດືອນຕົ້ນປີ/ປະຈຳປີ, ເອກະສານລາຍງານການເງິນປະຈຳໄຕມາດ/ປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນໃນເວັບໄຊ້ຂອງບໍລິສັດຢ່າງປົກກະຕິ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນປະຈຳປີທີ່ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳໄຕມາດ 1 ແລະ ໄຕມາດ 3 ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ພາຍໃນ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍມະຕິກອງປະຊຸມຜູ້ຖືຮຸ້ນ ພາຍໃນກຳນົດເວລາ 24 ຊົ່ວໂມງ ນັບແຕ່ວັນສຳເລັດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບເອກະສານລາຍງານການເງິນຂອງແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍຂໍ້ມູນກ່ຽວກັບມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່.<br>- ບໍລິສັດ ສ.ວ.ນ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ພະນັກງານຮັບຜິດຊອບຕິດຕໍ່ພົວພັນກັບນັກລົງທຶນ (ນັກລົງທຶນສຳພັນ) ບໍລິສັດຄວນເປີດເຜີຍໃນເວັບໄຊຂອງຕົນເພີ່ມຕື່ມ. | - ບໍລິສັດ ສ.ວ.ນ ບໍ່ໄດ້ລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ.<br>- ບໍລິສັດ ສ.ວ.ນ ບໍ່ໄດ້ ສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານໃຫ້ມວນຊົນຊາບ ຜ່ານທາງເວັບໄຊ້ຂອງບໍລິສັດ.<br>- ບໍລິສັດ ສ.ວ.ນ ບໍ່ໄດ້ເປີດເຜີຍນະໂຍບາຍຄ່າຕອບແທນ ແລະ ມູນຄ່າລວມທັງໝົດຂອງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. |

| | |
|---|---|
| - ບໍລິສັດ ສ.ວ.ນ ໄດ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານ ແລະ ຜູ້ຮັບຜິດຊອບວຽກງານເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ. | |

### 3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ບໍລິສັດ ສ.ວ.ນ ສາມາດປະຕິບັດໄດ້ທັງໝົດ (FA) 54%, ຮອງລົງມາປະຕິບັດໄດ້ບາງສ່ວນ (PA) 19% ແລະ ບໍ່ສາມາດປະຕິບັດໄດ້ (NA) 27% ຂອງຄະແນນໃນພາກນີ້ ຊຶ່ງມີລາຍລະອຽດລຸ່ມນີ້:

| ຂໍ້ປະຕິບັດສອດຄ່ອງ | ຂໍ້ຄົງຄ້າງ |
|---|---|
| - ບໍລິສັດ ສ.ວ.ນ ມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ.<br>- ສະພາບໍລິຫານມີສະມາຊິກເພດຍິງ 02 ທ່ານ.<br>- ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ.<br>- ສະພາບໍລິຫານ ປະກອບມີສະມາຊິກທັງໝົດ 09 ທ່ານ ແລະ ໃນນີ້ສະມາຊິກອິດສະຫຼະມີ 3 ທ່ານ.<br>- ປະທານສະພາບໍລິຫານ, ປະທານຄະນະກຳມະການກວດສອບ ແລະ ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ, ປະທານຄະນະກຳມະການຄັດເລືອກ, ປະທານຄະນະກຳມະການກຳນົດຄ່າຕອບແທນ ແມ່ນສະມາຊິກອິດສະຫຼະ.<br>- ສະມາຊິກສະພາບໍລິຫານແຕ່ລະຄົນໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ ກ່ອນການປະຊຸມ.<br>- ກົດລະບຽບຂອງ ບໍລິສັດ ສ.ວ.ນ ໄດ້ກຳນົດແຈ້ງກ່ຽວກັບເງື່ອນໄຂ, ສິດ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ.<br>- ສະພາບໍລິຫານໄດ້ມີການຈັດກອງປະຊຸມຢ່າງໜ້ອຍ 4 ຄັ້ງຕໍ່ປີ ແລະ ສະມາຊິກແຕ່ລະທ່ານໄດ້ເຂົ້າຮ່ວມກອງປະຊຸມສະພາບໍລິຫານຢ່າງໜ້ອຍ 3/4 ຂອງກອງປະຊຸມທັງໝົດພາຍໃນປີ.<br>- ສະພາບໍລິຫານ ໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສີ່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ພະນັກງານທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບທິດທາງແຜນຍຸດທະສາດຂອງບໍລິສັດ.<br>- ຄະນະກຳມະການກວດສອບ ຢ່າງໜ້ອຍມີສະມາຊິກອິດສະຫຼະ 1 ທ່ານ ທີ່ມີຄວາມຮູ້ ຫຼື ປະສົບການດ້ານບັນຊີ. | - ບໍລິສັດ ສ.ວ.ນ ຍັງບໍ່ໄດ້ກຳນົດເງື່ອນໄຂ, ມາດຕະຖານການເປັນສະມາຊິກສະພາບໍລິຫານ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກອິດສະລະ, ຕ້ອງມີຈຳນວນສະມາຊິກເພດຍິງຢ່າງໜ້ອຍ 1 ທ່ານ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ວິທີການເຮັດວຽກ ລວມໄປເຖິງນະໂຍບາຍກຳນົດຄ່າແທນຕ່າງໆຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ໄວ້ໃນລະບຽບພາຍໃນບໍລິສັດ ຕາມຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ.<br>- ສະພາບໍລິຫານບໍ່ໄດ້ຮັບຮອງລະບຽບພາຍໃນກ່ຽວກັບຄະນະກຳມະການຕ່າງໆຂອງສະພາບໍລິຫານ. ພ້ອມນັ້ນ, ຍັງບໍ່ໄດ້ເຜີຍແຜ່ລະບຽບດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ.<br>- ບໍລິສັດ ສ.ວ.ນ ບໍ່ໄດ້ເຜີຍແຜ່ກົດລະບຽບຂອງສະພາບໍລິຫານໄວ້ໃນເວັບໄຊຂອງບໍລິສັດ.<br>- ສະພາບໍລິຫານຍັງບໍ່ໄດ້ສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ.<br>- ກົດລະບຽບກ່ຽວກັບສະພາບໍລິຫານ ຍັງບໍ່ໄດ້ເຜີຍແຜ່ຜ່ານເວັບໄຊ້ຂອງບໍລິສັດ.<br>- ສະພາບໍລິຫານຍັງບໍ່ໄດ້ປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ.<br>- ສະພາບໍລິຫານ ຍັງບໍ່ໄດ້ກຳນົດກ່ຽວກັບອົງປະຊຸມຂອງກອງປະຊຸມສະພາບໍລິຫານ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.<br>- ສະພາບໍລິຫານບໍ່ໄດ້ເປີດເຜີຍມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກ |

| | |
|---|---|
| - ຄະນະກຳມະການກວດສອບໄດ້ປະຊຸມກັນຢ່າງໜ້ອຍ 4 ຄັ້ງຕໍ່ປີ.<br>- ສະພາບໍລິຫານໄດ້ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານທີ່ກວມເອົາວັນເວລາຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ວາລະປຶກສາກັນ.<br>- ຄະນະກຳມະການສະພາບໍລິຫານຕ່າງໆ ໄດ້ຈັດກອງປະຊຸມເປັນປົກກະຕິ ແລະ ສອດຄ່ອງຕາມລະບຽບການທີ່ກ່ຽວຂ້ອງ. | ງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.<br>- ຄະນະກຳມະການຄຸ້ມຄອງຄວາມສ່ຽງບໍ່ໄດ້ສ້າງ ແລະ ຄຸ້ມຄອງ ຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ. |

## 4. ສິ່ງທີ່ຕ້ອງໄດ້ປັບປຸງ

### 4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ ບໍລິສັດ ສ.ວ.ນ ຄວນແກ້ໄຂບັນຫາທີ່ຄົງຄ້າງ ດັ່ງນີ້:

- ຄວນຮັບຮອງນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ຄວນໄດ້ຮັບສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດເຫດການກ່ຽວກັບການລົງທຶນ, ການຊື້-ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ, ການອອກຈຳໜ່າຍຮຸ້ນອອກໃໝ່ ແລະ ເຫດການອື່ນໆທີ່ສຳຄັນ ທີ່ຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນລະບຽບພາຍໃນຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງທຶນ, ນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍກ່ຽວກັບການພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່, ນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ, ນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ;
- ສະພາບໍລິຫານ ຄວນກຳນົດເງື່ອນໄຂ, ມາດຕະຖານຂອງການເປັນສະມາຊິກສະພາບໍລິຫານ, ໂຄງປະກອບບຸກຄະກອນສະພາບໍລິຫານຕ້ອງປະກອບສະມາຊິກອິດສະຫຼະ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກສະພາບໍລິຫານເພດຍິງ, ສິດ, ໜ້າທີ່, ຄວາມຮັບຜິດຊອບ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ແຜນວິທີການເຮັດວຽກ, ນະໂຍບາຍກຳນົດຄ່າຕອບແທນຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ ຕາມຫຼັກການຄຸ້ມຄອງບໍລິຫານ ທີ່ກຳນົດໄວ້ໃນຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ;

- ຄວນສ້າງລະບຽບສະເພາະຂອງຄະນະກຳມະການຕ່າງໆຂອງສະພາບໍລິຫານ ເປັນຕົ້ນສິດ, ໜ້າທີ່, ຄວາມຮັບຜິດຊອບ, ໂຄງປະກອບບຸກຄະລາກອນ, ມາດຕະຖານ ແລະ ເງື່ອນໄຂການເປັນສະມາຊິກຄະນະກຳມະການ, ຂັ້ນຕອນ ແລະ ວິທີການເຮັດວຽກ ລວມໄປເຖິງນະໂຍບາຍກຳນົດຄ່າຕອບແທນຕ່າງໆ ຂອງຄະນະກຳມະການ ແລະ ອື່ນໆ ພ້ອມທັງສະເໜີໃຫ້ສະພາບໍລິຫານຂອງບໍລິສັດ ພິຈາລະນາ ແລະ ຮັບຮອງເອົາ;
- ສະພາບໍລິຫານຄວນສ້າງນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຟ້ອງ ກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ ລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຄວນສ້າງ ແລະ ຄຸ້ມຄອງ ຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.

**4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ**

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ ບໍລິສັດ ສ.ອ.ນ ຄວນເພີ່ມຄວາມເອົາໃຈໃສ່ບັນຫາ ດັ່ງນີ້:

- ຄວນເປີດເຜີຍຂໍ້ມູນກ່ຽວກັບນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ, ນະໂຍບາຍເງິນປັນຜົນ, ນະໂຍບາຍການກຳນົດຄ່າຕອບແທນ ແລະ ມູນຄ່າລວມທັງໝົດຂອງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ, ເຫດການສຳຄັນທີ່ເກີດຂຶ້ນ, ຂໍ້ມູນກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມຂອງຕົນ (ຖ້າມີ ຫຼື ບໍ່ມີກໍຕາມ) ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ຄວນລາຍງານ ແລະ ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ, ຄະນະອຳນວຍການຂອງບໍລິສັດ, ລວມເຖິງເປີດເຜີຍຂໍ້ມູນການຊື້ ຂາຍຮຸ້ນຂອງຫົວໜ້າກວດສອບພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນເວລາ 72 ຊົ່ວໂມງ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບ ຜ່ານທາງເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ;
- ສະພາບໍລິຫານຕ້ອງຮັບຮອງລະບຽບພາຍໃນກ່ຽວກັບຄະນະກຳມະການຕ່າງໆຂອງສະພາບໍລິຫານ ພ້ອມທັງເຜີຍແຜ່ລະບຽບດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ;
- ສະພາບໍລິຫານຄວນສ້າງ ແລະ ເຜີຍແຜ່ມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ຄວນເຜີຍແຜ່ກົດລະບຽບຂອງສະພາບໍລິຫານໃນເວັບໄຊຂອງບໍລິສັດ.

ຜູ້ອຳນວຍການໃຫຍ່ ຕລຊລ




ສຸພັກ ຖິ່ນໄຊພອນ